# ການເຂົ້າເຖິງຄວາມຍຸຕິທຳ ສຳລັບຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (SGBV) ໃນສປປ ລາວ: ບົດສຶກສາຂໍ້ມູນເບື້ອງຕົ້ນ

ບົດສະຫຼຸບຫຍໍ້

ເດືອນ ມີນາ 2026



International Commission of Jurists

Kingdom of the Netherlands

Composed of up to 60 eminent judges and lawyers from all regions of the world, the International Commission of Jurists (ICJ) promotes and protects human rights through the Rule of Law, by using its unique legal expertise to develop and strengthen national and international justice systems. Established in 1952 and active on the five continents, the ICJ aims to ensure the progressive development and effective implementation of international human rights and international humanitarian law; secure the realization of civil, cultural, economic, political and social rights; safeguard the separation of powers; and guarantee the independence of the judiciary and legal profession.

**ການເຂົ້າເຖິງຄວາມຍຸຕິທຳ ສຳລັບຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (SGBV) ໃນສປປ ລາວ**

ບົດສຶກສາຂໍ້ມູນເບື້ອງຕົ້ນ

ບົດສະຫຼຸບຫຍໍ້

© Copyright International Commission of Jurists

Published in March 2026

The International Commission of Jurists (ICJ) permits free reproduction of extracts from any of its publications provided that due acknowledgment is given and a copy of the publication carrying the extract is sent to its headquarters at the following address:

International Commission of Jurists
Rue des Buis 3
P.O. Box 1740
1211 Geneva 1
Switzerland
t: +41 22 979 38 00
www.icj.org

# ການເຂົ້າເຖິງຄວາມຍຸຕິທຳ ສຳລັບຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (SGBV) ໃນສປປ ລາວ: ບົດສຶກສາຂໍ້ມູນເບື້ອງຕົ້ນ

ບົດສະຫຼຸບຫຍໍ້

ເດືອນ ມີນາ 2026

## ບົດສະຫຼຸບຫຍໍ້

ຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (SGBV)[1] ຍັງຄົງເປັນບັນຫາດ້ານສິດທິມະນຸດທີ່ຮ້າຍແຮງ, ແຜ່ຫຼາຍ ແລະ ສ່ວນໃຫຍ່ແມ່ນບໍ່ໄດ້ຮັບການລາຍງານ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ). ເຖິງແມ່ນວ່າຈະຍັງຂາດຂໍ້ມູນລະດັບຊາດທີ່ຄົບຖ້ວນ ແລະ ທັນສະໄໝ, ແຕ່ຫຼັກຖານທີ່ມີຢູ່ສະແດງໃຫ້ເຫັນວ່າ SGBV ຍັງຄົງສົ່ງຜົນກະທົບຕໍ່ປະຊາກອນໃນສັດສ່ວນທີ່ໜ້າເປັນຫ່ວງຫຼາຍ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກຍິງ, ລວມທັງສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ກຸ່ມທີ່ມີຄວາມສ່ຽງອື່ນໆເຊັ່ນ: ແມ່ຍິງພິການ.

ຂໍ້ມູນຈາກການສໍາຫຼວດຍັງຊີ້ໃຫ້ເຫັນເຖິງຄວາມແຜ່ຫຼາຍຂອງ SGBV ແລະ ບັນທັດຖານທາງສັງຄົມທີ່ຝັງຮາກເລິກ ເຊິ່ງຍັງຄົງຖືກຍອມຮັບ ຫຼື ເບິ່ງວ່າຄວາມຮຸນແຮງເປັນເລື່ອງປົກກະຕິ, ໂດຍສະເພາະໃນສາຍພົວພັນໃກ້ຊິດ ແລະ ໃນຄອບຄົວ. ບັນທັດຖານເຫຼົ່ານີ້ລວມມີຄວາມເຊື່ອທີ່ວ່າ ຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວ, ແມ່ຍິງຄວນອົດທົນຕໍ່ການຖືກໃຊ້ຄວາມຮຸນແຮງເພື່ອຮັກສາສະຖາບັນຄອບຄົວ ແລະ ການທີ່ຜູ້ຖືກເຄາະຮ້າຍບໍ່ໄດ້ຕໍ່ສູ້ຂັດຂືນທາງກາຍະພາບໃນເວລາມີຄວາມຮຸນແຮງນັ້ນ ໝາຍເຖິງການບໍ່ມີຄວາມຮຸນແຮງທາງເພດເກີດຂຶ້ນ. ທັດສະນະຄະຕິດັ່ງກ່າວສົ່ງຜົນໂດຍກົງເຮັດໃຫ້ອັດຕາການລາຍງານ SGBV ຕໍ່າ ແລະ ຜູ້ຖືກເຄາະຮ້າຍມີການພົວພັນກັບກົນໄກຍຸຕິທໍາແບບເປັນທາງການໃນຂອບເຂດຈໍາກັດ.

ບົດສຶກສາຂໍ້ມູນເບື້ອງຕົ້ນນີ້ ເຮັດຂຶ້ນໂດຍຄະນະກໍາມາທິການກົດໝາຍສາກົນ (ICJ) ພາຍໃຕ້ການສະໜັບສະໜູນຈາກສະຖານທູດ ຣາຊະອານາຈັກ ເນເທີແລນ, ເພື່ອສຶກສາເບິ່ງວ່າ ກົດໝາຍ, ນະໂຍບາຍ ແລະ ການປະຕິບັດຂອງ ສປປ ລາວ ໄດ້ສົ່ງເສີມ ຫຼື ຂັດຂວາງການເຂົ້າເຖິງຄວາມຍຸຕິທໍາ ແລະ ການບັນເທົາທຸກທີ່ມີປະສິດທິຜົນສໍາລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກ SGBV ແນວໃດ. ບົດສຶກສາຍັງໄດ້ຊີ້ໃຫ້ເຫັນເຖິງຂໍ້ຄົງຄ້າງທາງດ້ານລະບົບໃນຂອບເຂດກົດໝາຍ, ການຕອບໂຕ້ຂອງສະຖາບັນ ແລະ ການບໍລິການຊ່ວຍເຫຼືອທີ່ມີຢູ່, ພ້ອມທັງໃຫ້ຂໍ້ສະເໜີແນະທີ່ເປັນຮູບປະທໍາ ເພື່ອແນໃສ່ເສີມສ້າງການຕອບໂຕ້ຕໍ່ SGBV ໂດຍຖືເອົາຜູ້ລອດຊີວິດເປັນໃຈກາງ ແລະ ອີງໃສ່ພື້ນຖານສິດທິມະນຸດ.

### ກອບກົດໝາຍທີ່ກ່ຽວຂ້ອງກັບ SGBV

ການຕອບໂຕ້ SGBV ໃນ ສປປ ລາວ ແມ່ນຢູ່ພາຍໃຕ້ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (LPCVWC) ແລະ ປະມວນກົດໝາຍອາຍາ ເປັນຫຼັກ. ເຖິງແມ່ນວ່າກົດໝາຍເຫຼົ່ານີ້ຈະສ້າງຂອບເຂດພື້ນຖານໃນການແກ້ໄຂຄວາມຮຸນແຮງ, ແຕ່ຍັງຄົງມີຊ່ອງຫວ່າງທີ່ສໍາຄັນ ທີ່ຫຼຸດຜ່ອນປະສິດທິພາບຂອງການບໍລິການ ແລະ ໃນບາງກໍລະນີ ກໍເປັນການກີດກັນຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດບໍ່ສາມາດເຂົ້າເຖິງຄວາມຍຸຕິທໍາ.

---

[1] ນິຍາມສໍາລັບຄໍາສັບຕ່າງໆ ທີ່ນໍາໃຊ້ເຂົ້າໃນວຽກງານຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (SGBV) ແມ່ນມີລາຍລະອຽດຢູ່ໃນພາກອະທິບາຍສັບຂອງບົດລາຍງານສະບັບນີ້. ສໍານັກງານໄອຍະການ (OTP) ຂອງສານອາຍາສາກົນ (ICC) ໄດ້ນິຍາມຄວາມຮຸນແຮງບົນພື້ນຖານທາງເພດວ່າແມ່ນ "ຄໍາສັບລວມທີ່ໝາຍເຖິງການກະທໍາໃດໆ ທີ່ກໍ່ໃຫ້ເກີດອັນຕະລາຍ ເຊິ່ງຖືກກະທໍາໂດຍອີງໃສ່ຄວາມແຕກຕ່າງທາງດ້ານບົດບາດຍິງ-ຊາຍ ທີ່ສັງຄົມກໍານົດໃຫ້, ເຊິ່ງສ່ວນໃຫຍ່ແມ່ນຍ້ອນເພດສະພາວະ, ເພດໂດຍກໍາເນີດ ຫຼື ລັກສະນະທາງເພດຂອງບຸກຄົນນັ້ນໆ ບໍ່ວ່າຈະເປັນເພດທີ່ແທ້ຈິງ ຫຼື ຕາມການຮັບຮູ້ຂອງສັງຄົມກໍຕາມ".
ສໍານັກງານໄອຍະການ (OTP) ຍັງໄດ້ລະບຸຕື່ມວ່າ ຄວາມຮຸນແຮງດັ່ງກ່າວລວມມີການກະທໍາທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຫຼື ຄວາມເຈັບປວດທາງດ້ານຮ່າງກາຍ, ທາງເພດ ຫຼື ທາງຈິດໃຈ; ການຂົ່ມຂູ່ທີ່ຈະກະທໍາໃນລັກສະນະດັ່ງກ່າວ; ການບີບບັງຄັບ ແລະ ການຈໍາກັດອິດສະລະພາບ. ການກະທໍາເຫຼົ່ານີ້ສາມາດເກີດຂຶ້ນໄດ້ທັງໃນພື້ນທີ່ສາທາລະນະ ຫຼື ໃນສະຖານທີ່ສ່ວນຕົວ ແລະ ເປັນການລະເມີດສິດທິມະນຸດຂອງບຸກຄົນ. ຄວາມຮຸນແຮງບົນພື້ນຖານທາງເພດ ມີຮາກເຫງົ້າມາຈາກຄວາມບໍ່ສະເໝີພາບທາງດ້ານໂຄງສ້າງລະຫວ່າງບົດບາດຍິງ-ຊາຍ ແລະ ຄວາມບໍ່ສົມດຸນຂອງອໍານາດ, ເຊິ່ງເປັນທັງອາການທີ່ສະແດງອອກຂອງຄວາມບໍ່ຍຸຕິທໍາທາງດ້ານບົດບາດຍິງ-ຊາຍ ແລະ ເປັນເຄື່ອງມືທີ່ຖືກນໍາໃຊ້ເພື່ອຕອກຍໍ້າຄວາມບໍ່ສະເໝີພາບນັ້ນ. ນອກຈາກນີ້, ຄວາມຮຸນແຮງດັ່ງກ່າວຍັງລວມເອົາຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງທາງດ້ານສຸຂະພາບຈະເລີນພັນນໍາອີກ.

ຂໍ້ຄົງຄ້າງພື້ນຖານຂອງກອບກົດໝາຍແມ່ນ ການຮັບຮູ້ໃນຂອບເຂດຈຳກັດວ່າໃຜແດ່ທີ່ຖືວ່າເປັນຜູ້ຖືກເຄາະຮ້າຍຈາກ SGBV. ຕາມນິຍາມຂອງ LPCVWC ແມ່ນນຳໃຊ້ສະເພາະກັບແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ, ໃນຂະນະທີ່ຂໍ້ກຳນົດຂອງປະມວນກົດໝາຍອາຍາທີ່ກ່ຽວຂ້ອງຫຼາຍຂໍ້ ຫຼື ການຈັດຕັ້ງປະຕິບັດຕົວຈິງ ກໍຈຳກັດຂອບເຂດຜູ້ຖືກເຄາະຮ້າຍໄວ້ພຽງແຕ່ແມ່ຍິງ ແລະ ເດັກນ້ອຍເຊັ່ນກັນ. ສິ່ງຜົນໃຫ້ເພດຊາຍ ແລະ ບຸກຄົນທີ່ມີຄວາມຫຼາກຫຼາຍທາງເພດ ທີ່ອາດປະສົບກັບ SGBV ຄືກັນນັ້ນ ຖືກກີດກັນອອກຈາກການຮັບຮູ້ທາງກົດໝາຍໃນຖານະຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ແລະ/ຫຼື ບໍ່ໄດ້ຮັບການຄຸ້ມຄອງ.

ນອກຈາກນີ້, ນິຍາມຂອງຄວາມຮຸນແຮງທາງເພດພາຍໃຕ້ກົດໝາຍລາວ ຍັງຕໍ່າກວ່າລະດັບທີ່ກົດໝາຍ ແລະ ມາດຕະຖານສາກົນກຳນົດໄວ້. ຕົວຢ່າງ: ການຂົ່ມຂືນບໍ່ໄດ້ຖືກນິຍາມບົນພື້ນຖານຂອງ "ການຂາດຄວາມສະໝັກໃຈ", ແຕ່ຊໍ້າພັດໄປອີງໃສ່ການໃຊ້ກຳລັງ ຫຼື ການຂົ່ມຂູ່ ຫຼື ການຕົວະຍົວະ ໂດຍບໍ່ໄດ້ຄຳນຶງເຖິງສະພາວະບີບບັງຄັບທີ່ສົ່ງຜົນຕໍ່ຄວາມສະໝັກໃຈຢ່າງພຽງພໍ. ການຂົ່ມຂືນຂອງຄູ່ສົມລົດ ຖືກຖືວ່າເປັນຄວາມຜິດແຍກຕ່າງຫາກ ແລະ ເບິ່ງຄືວ່າມີຄວາມຮ້າຍແຮງໜ້ອຍກວ່າ, ມີໂທດເບົາກວ່າ ແລະ ຍັງສາມາດນຳເຂົ້າສູ່ຂະບວນການໄກ່ເກ່ຍໄດ້[2]. ຂໍ້ຄົງຄ້າງດັ່ງກ່າວເປັນການຕອກຍໍ້າອະຄະຕິທາງເພດທີ່ເປັນອັນຕະລາຍ, ຫຼຸດຜ່ອນຄວາມຮ້າຍແຮງຂອງຄວາມຮຸນແຮງທາງເພດໃນຊີວິດສົມລົດ ແລະ ທຳລາຍສິດໃນການຕັດສິນໃຈດ້ວຍຕົນເອງ ລວມທັງການປົກປ້ອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ. ການຂົ່ມຂືນທີ່ນຳໄປສູ່ການຂ້າຄົນຕາຍ ກໍອາດຈະຖືກລົງໂທດເຖິງຂັ້ນປະຫານຊີວິດ. ກ່ຽວກັບບັນຫານີ້, ຄະນະກຳມາທິການກົດໝາຍສາກົນ (ICJ) ເຫັນວ່າ ເຖິງແມ່ນວ່າພາຍໃຕ້ກົດໝາຍ ແລະ ມາດຕະຖານສິດທິມະນຸດສາກົນ ລັດຈະມີພັນທະໃນການວາງມາດຕະການທີ່ຈຳເປັນທັງໝົດເພື່ອຕອບໂຕ້ຕໍ່ SGBV ຢ່າງມີປະສິດທິພາບ, ລວມທັງການດຳເນີນການສືບສວນ-ສອບສວນຢ່າງວ່ອງໄວ ແລະ ເປັນທຳ ເພື່ອນຳເອົາຜູ້ກະທຳຜິດມາລົງໂທດຕາມລະບຽບກົດໝາຍ, ຕະຫຼອດຮອດການຮັບປະກັນການປົກປ້ອງ ແລະ ການຊ່ວຍເຫຼືອທີ່ມີຄວາມໝາຍໃຫ້ແກ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ, ແຕ່ເປົ້າໝາຍເຫຼົ່ານີ້ສາມາດຈັດຕັ້ງປະຕິບັດ ແລະ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໂດຍບໍ່ນຳໃຊ້ໂທດປະຫານຊີວິດ. ICJ ຄັດຄ້ານໂທດປະຫານຊີວິດໃນທຸກກໍລະນີໂດຍບໍ່ມີຂໍ້ຍົກເວັ້ນ. ໂທດປະຫານຊີວິດຖືເປັນການລົງໂທດທີ່ໂຫດຮ້າຍ, ໄຮ້ມະນຸດສະທຳ ແລະ ຕໍ່າຊ້າທີ່ສຸດ, ທັງເປັນການລະເມີດສິດໃນການມີຊີວິດຢ່າງຮ້າຍແຮງ[3].

---

[2] ພາຍໃຕ້ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (LPCVWC), "ການໄກ່ເກ່ຍ" ອາດຖືກນຳໃຊ້ເປັນຮູບແບບໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງ ແລະ ສາມາດດຳເນີນການໄດ້ໂດຍອົງການຈັດຕັ້ງທີ່ຖືກກຳນົດໄວ້ເທົ່ານັ້ນເຊັ່ນ: ໜ່ວຍງານໃຫ້ຄຳປຶກສາ ແລະ ຄຸ້ມຄອງແມ່ຍິງ ແລະ ເດັກນ້ອຍ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຕຳຫຼວດ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ. ທັງນີ້, ການໄກ່ເກ່ຍແມ່ນຈຳກັດສະເພາະການກະທຳຜິດທີ່ກົດໝາຍກຳນົດໃຫ້ເປັນໂທດສະຖານເບົາ (ລະຫຸໂທດ) ຫຼື ມີກຳນົດໂທດຈຳຄຸກສູງສຸດຕໍ່າກວ່າໜຶ່ງປີ (ເບິ່ງລາຍລະອຽດເພີ່ມເຕີມໃນພາກທີ 3.2).

[3] ສິດໃນການມີຊີວິດ ຖືກຮັບປະກັນໂດຍບັນດາເຄື່ອງມືດ້ານສິດທິມະນຸດສາກົນ ແລະ ພາກພື້ນທີ່ສຳຄັນທັງໝົດ, ລວມທັງ ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ (ມາດຕາ 3), ສົນທິສັນຍາສາກົນວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ ຫຼື ICCPR (ມາດຕາ 6), ອະນຸສັນຍາເລືອກເຟັ້ນສະບັບທີສອງ ຂອງສັນຍາ ICCPR ທີ່ແນໃສ່ການຍົກເລີກໂທດປະຫານຊີວິດ, ສົນທິສັນຍາເອີຣົບວ່າດ້ວຍສິດທິມະນຸດ (ມາດຕາ 2), ອະນຸສັນຍາສະບັບທີ 6 ຂອງອະນຸສັນຍາເອີຣົບວ່າດ້ວຍສິດທິມະນຸດ ກ່ຽວກັບການຍົກເລີກໂທດປະຫານຊີວິດໃນຍາມສະຫງົບ ແລະ ອະນຸສັນຍາສະບັບທີ 13 ຂອງອະນຸສັນຍາເອີຣົບວ່າດ້ວຍສິດທິມະນຸດ ກ່ຽວກັບການຍົກເລີກໂທດປະຫານຊີວິດໃນທຸກສະຖານະການ.
ໂທດປະຫານຊີວິດເປັນສິ່ງທີ່ບໍ່ສາມາດເອົາຄືນມາໄດ້, ມີຄວາມສ່ຽງຕໍ່ການຜິດພາດ ແລະ ມີແນວໂນ້ມທີ່ຈະສົ່ງຜົນກະທົບຕໍ່ກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມສ່ຽງຢ່າງບໍ່ສົມສ່ວນ. ດັ່ງນັ້ນ, ການນຳໃຊ້ໂທດດັ່ງກ່າວບໍ່ພຽງແຕ່ຂັດກັບຄຸນຄ່າທີ່ໄດ້ກຳນົດໄວ້ໃນເຄື່ອງມືທາງກົດໝາຍສິດທິມະນຸດສາກົນຕ່າງໆເທົ່ານັ້ນ, ແຕ່ຍັງທຳລາຍການສະແຫວງຫາຄວາມຍຸຕິທຳ ແລະ ການພັດທະນາລະບົບກົດໝາຍທີ່ເປັນທຳ ແລະ ມີມະນຸດສະທຳ. ໂທດປະຫານຊີວິດ ບໍ່ໄດ້ຕອບໂຈດຈຸດປະສົງຫຼັກຂອງການກຳນົດໂທດໃນຄະດີອາຍາ ເຊິ່ງກໍຄືການປັບປຸງບຸກຄົນໃຫ້ສາມາດກັບຄືນສູ່ສັງຄົມໄດ້. ຍິ່ງໄປກວ່ານັ້ນ, ບໍ່ມີຫຼັກຖານໃດຊີ້ໃຫ້ເຫັນວ່າໂທດປະຫານຊີວິດສາມາດສະກັດກັ້ນອາດຊະຍາກຳໄດ້ຢ່າງມີປະສິດທິພາບ.
ການຍົກເລີກໂທດປະຫານຊີວິດ ບໍ່ພຽງແຕ່ເປັນບາດກ້າວທີ່ສຳຄັນໃນການສ້າງໂລກທີ່ໃຫ້ກຽດແກ່ຄຸນຄ່າພາຍໃນຂອງທຸກຄົນ ແລະ ເປັນການສະແຫວງຫາຄວາມຍຸຕິທຳໃນຮູບແບບທີ່ຍຶດໝັ້ນໃນຫຼັກການແຫ່ງຄວາມເປັນທຳ, ຫຼັກການມະນຸດສະທຳ ແລະ ຫຼັກການນິຕິທຳເທົ່ານັ້ນ, ແຕ່ຍັງເປັນການສົ່ງເສີມ ແລະ ຄຸ້ມຄອງສັກສີຂອງຄວາມເປັນມະນຸດ ແລະ ສິດທິມະນຸດອີກດ້ວຍ. ດັ່ງນັ້ນ, ICJ ຈຶ່ງຮຽກຮ້ອງມາຍັງທຸກປະເທດທີ່ຍັງຄົງມີໂທດປະຫານຊີວິດ ໃຫ້ຍົກເລີກໂທດດັ່ງກ່າວ ແລະ ໃນລະຫວ່າງທີ່ລໍຖ້າການຍົກເລີກນັ້ນ, ໃຫ້ກຳນົດການໂຈະການປະຫານຊີວິດໄວ້ກ່ອນ ແລະ ປະຕິບັດຕາມສິດໃນການມີຊີວິດຢ່າງເຕັມສ່ວນ.

ກອບກົດໝາຍຍັງຂາດການແກ້ໄຂບັນຫາການລ່ວງລະເມີດທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດຜ່ານລະບົບເຕັກໂນໂລຊີ (TFGBV) ຢ່າງພຽງພໍ. ບໍ່ມີການກຳນົດໂທດທາງອາຍາສະເພາະສຳລັບການລ່ວງລະເມີດທາງເພດ; ແຕ່ເຈົ້າໜ້າທີ່ພັດນຳໃຊ້ຂໍ້ກຳນົດທີ່ກະຈັດກະຈາຍຢູ່ໃນກົດໝາຍວ່າດ້ວຍແຮງງານ, LPCVWC ແລະ ປະມວນກົດໝາຍອາຍາ ເຊິ່ງຫຼາຍຂໍ້ຍັງຂາດຄວາມຊັດເຈນ. ຄຳສັບໃນປະມວນກົດໝາຍອາຍາ ເຊັ່ນ: "ການເຮັດໃຫ້ມີຄວາມອັບອາຍທາງເພດ" ແລະ ການກະທຳທີ່ "ຂັດຕໍ່ຮີດຄອງປະເພນີອັນດີງາມ" ແມ່ນບໍ່ໄດ້ຖືກນິຍາມ ແລະ ມີຄວາມໝາຍກວ້າງເກີນໄປ, ເຮັດໃຫ້ການຕີຄວາມໝາຍບໍ່ເປັນເອກະພາບ ແລະ ການບັງຄັບໃຊ້ກົດໝາຍອ່ອນແອ. ສິ່ງຜົນໃຫ້ ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ມັກພະເຊີນກັບຄວາມບໍ່ແນ່ນອນທາງດ້ານກົດໝາຍ, ການປະຕິເສດທີ່ຈະຮັບຄຳຮ້ອງຟ້ອງ ຫຼື ຂາດການສືບສວນ-ສອບສວນທີ່ມີປະສິດທິພາບຕໍ່ເຫດການທີ່ໄດ້ແຈ້ງຄວາມຕໍ່ເຈົ້າໜ້າທີ່; ໃນຂະນະດຽວກັນ, ຂໍ້ກຳນົດບາງຂໍ້ຂອງປະມວນກົດໝາຍອາຍາ ພັດຖືກນຳໃຊ້ໃນລັກສະນະທີ່ກວ້າງຂວາງເກີນໄປ ເຊິ່ງມີຄວາມສ່ຽງທີ່ຈະກາຍເປັນການຈຳກັດການສະແດງອອກທີ່ຖືກຕ້ອງຕາມກົດໝາຍ ແທນທີ່ຈະເປັນການແກ້ໄຂຜົນເສຍຫາຍຢ່າງມີປະສິດທິຜົນ.

ນອກຈາກນັ້ນ, ຂໍ້ກຳນົດໃນປະມວນກົດໝາຍອາຍາຫຼາຍຂໍ້ ຍັງກຳນົດການກະທຳທີ່ມີໂທດທາງອາຍາທີ່ສົ່ງຜົນກະທົບຕໍ່ແມ່ຍິງຢ່າງບໍ່ສົມສ່ວນ ແລະ ເຮັດໃຫ້ຜູ້ຖືກເຄາະຮ້າຍບໍ່ກ້າລາຍງານ SGBV ເຊັ່ນ: ການເອົາຜິດທາງອາຍາຕໍ່ການລຸລູກ, ຜູ້ຖືກເຄາະຮ້າຍຈາກການຮ່ວມປະເວນີໃນເຄືອຍາດ (incest), ການຂາຍບໍລິການທາງເພດ, ການທຳມິດສະຈານ ແລະ ການມີເພດສຳພັນໂດຍສະໝັກໃຈໃນຮູບແບບອື່ນໆເຊັ່ນ: ການມີເພດສຳພັນກັບພຣະພິກຂຸ, ສາມະເນນ, ແມ່ຂາວ ຫຼື ລີສີ. ເຖິງແມ່ນວ່າການລຸລູກຈະຖືກອະນຸຍາດໃຫ້ເຮັດໄດ້ໃນບາງກໍລະນີທີ່ຈຳເປັນ, ແຕ່ການກະທຳດັ່ງກ່າວຍັງຄົງຖືກກຳນົດໃຫ້ຢູ່ພາຍໃຕ້ການຄວບຄຸມຂອງກົດໝາຍອາຍາ ແລະ ການເຂົ້າເຖິງການບໍລິການລຸລູກທີ່ປອດໄພ ແລະ ຖືກຕ້ອງຕາມກົດໝາຍນັ້ນ ຍັງຄົງມີຂໍ້ຈຳກັດຢ່າງເຂັ້ມງວດໃນທາງປະຕິບັດ.

**ການເພິ່ງພາຂະບວນການຍຸຕິທຳທີ່ບໍ່ເປັນທາງການ ແລະ ການໄກ່ເກ່ຍ**

ອີກໜຶ່ງອຸປະສັກທີ່ສຳຄັນຕໍ່ການເຂົ້າເຖິງຄວາມຍຸຕິທຳຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກ SGBV ແມ່ນການເພິ່ງພາຢ່າງກວ້າງຂວາງຕໍ່ກົນໄກຍຸຕິທຳແບບຊຸມຊົນແບບບໍ່ເປັນທາງການ ຫຼື ແບບຮີດຄອງປະເພນີ ເຊິ່ງຖືກນຳສະເໜີໃນຮູບແບບຂອງທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງ. ກົດໝາຍ LPCVWC ອະນຸຍາດໃຫ້ມີການ "ສຶກສາອົບຮົມ", "ການປະນີປະນອມ"[4] ແລະ ການໄກ່ເກ່ຍໃນຫຼາຍກໍລະນີ, ລວມທັງບາງກໍລະນີທີ່ກ່ຽວຂ້ອງກັບ SGBV ທີ່ຮ້າຍແຮງຫຼາຍ. ນອກຈາກນັ້ນ, ເຖິງແມ່ນວ່າໃນບາງກໍລະນີທີ່ກົດໝາຍສິດທິມະນຸດສາກົນອາດຈະອະນຸຍາດໃຫ້ດຳເນີນຂະບວນການດັ່ງກ່າວໄດ້ເປັນກໍລະນີຍົກເວັ້ນ[5], ແຕ່ກົດໝາຍພາຍໃນພັດຍັງຂາດມາດຖານທີ່ຊັດເຈນໃນການກຳນົດວ່າກໍລະນີໃດແດ່ທີ່ສາມາດນຳເຂົ້າສູ່ຂະບວນການເຫຼົ່ານັ້ນໄດ້ ແລະ ບໍ່ໄດ້ກຳນົດໃຫ້ມີການປະເມີນແບບເອກະລາດຢ່າງສະເໝີຕົ້ນສະເໝີປາຍເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ໄດ້ໃຫ້ຄວາມສະໝັກໃຈໂດຍອິດສະຫຼະ ແລະ ໄດ້ຮັບຂໍ້ມູນຢ່າງຄົບຖ້ວນ[6]. ຈາກການສຳພາດໃນບົດສຶກສານີ້ຊີ້ໃຫ້ເຫັນເຖິງຄວາມສັບສົນຢ່າງກວ້າງຂວາງຂອງບັນດາເຈົ້າໜ້າທີ່ທ້ອງຖິ່ນ ກ່ຽວກັບວ່າຄະດີໃດແດ່ທີ່ຕ້ອງດຳເນີນຕາມລະບົບຍຸຕິທຳແບບເປັນທາງການ, ເຖິງແມ່ນວ່າຈະເປັນອາດຊະຍາກຳທີ່ຮ້າຍແຮງເຊັ່ນ: ການຂົ່ມຂືນ ບາງຄັ້ງກໍຖືກສົ່ງໄປໄກ່ເກ່ຍ, ເຊິ່ງນຳໄປສູ່ການປ່ອຍໃຫ້ຜູ້ກະທຳຜິດລອຍນວນ ບໍ່ໄດ້ຮັບໂທດ ໃນທາງປະຕິບັດ.

---

[4] ພາຍໃຕ້ກົດໝາຍ LPCVWC, "ການສຶກສາອົບຮົມ" ຫຼື "ການປະນີປະນອມ" ອາດຖືກນຳໃຊ້ເປັນຮູບແບບຂອງການຕົກລົງຍອມຄວາມ ທີ່ດຳເນີນໂດຍສະມາຊິກໃນຄອບຄົວ, ຍາດພີ່ນ້ອງໃກ້ຊິດ, ເຖົ້າແກ່ແນວໂຮມບ້ານ ຫຼື ອົງການຈັດຕັ້ງທີ່ຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທຳຜິດສັງກັດຢູ່, ໃນກໍລະນີທີ່ການກະທຳນັ້ນ "ບໍ່ກໍ່ໃຫ້ເກີດຄວາມເສຍຫາຍຫຼາຍ".

[5] ຄະນະກຳມະການ CEDAW, 'ຂໍ້ສະເໜີແນະທົ່ວໄປສະບັບທີ 35 ວ່າດ້ວຍຄວາມຮຸນແຮງບົນພື້ນຖານທາງເພດຕໍ່ແມ່ຍິງ, ປັບປຸງຂໍ້ສະເໜີແນະທົ່ວໄປສະບັບທີ 19 (1992)', ເອກະສານ ສປຊ UN Doc. CEDAW/C/GC/35, 2017, ຂໍ້ທີ 32 (ຂ); ແລະ ຄະນະກຳມະການ CEDAW, 'ຂໍ້ສະເໜີແນະທົ່ວໄປສະບັບທີ 33 ວ່າດ້ວຍການເຂົ້າເຖິງຍຸຕິທຳຂອງແມ່ຍິງ,' ເອກະສານ ສປຊ UN Doc CEDAW/C/GC/33, 3 ສິງຫາ 2015, ຂໍ້ທີ 57.

[6] ລາຍລະອຽດກ່ຽວກັບການນຳໃຊ້ກົນໄກການແກ້ໄຂຂໍ້ຂັດແຍ່ງທາງເລືອກ ແມ່ນມີຢູ່ໃນພາກທີ 3.2 ຂອງບົດສຶກສາ.

ນອກຈາກນັ້ນ, ໃນພາກປະຕິບັດຕົວຈິງ, ການໄກ່ເກ່ຍມັກຈະດຳເນີນໂດຍບຸກຄົນໃນລະດັບບ້ານ ທີ່ຂາດການຝຶກອົບຮົມສະເພາະດ້ານ ແລະ ມັກຈະມີທັດສະນະຄະຕິແບບປິຕາທິປະໄຕ (ຊາຍເປັນໃຫຍ່) ທີ່ຝັງຮາກເລິກ. ຂະບວນການເຫຼົ່ານີ້ມັກຈະໃຫ້ຄວາມສຳຄັນກັບສະຖາບັນຄອບຄົວ ແລະ ການປະນີປະນອມຫຼາຍກວ່າຄວາມປອດໄພຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ, ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ການເຂົ້າເຖິງການບັນເທົາທຸກທີ່ມີປະສິດທິພາບ.

**ອຸປະສັກດ້ານການປະຕິບັດ ແລະ ຊັບພະຍາກອນ**

ນອກຈາກຂໍ້ຄົງຄ້າງດ້ານກົດໝາຍ, ຜູ້ຖືກເຄາະຮ້າຍ/ຜູ້ລອດພົ້ນຈາກ SGBV ຍັງພະເຊີນກັບອຸປະສັກອື່ນໆໃນການເຂົ້າເຖິງຄວາມຍຸຕິທຳ. ອະຄະຕິທາງເພດທີ່ເປັນອັນຕະລາຍ ແລະ ທັດສະນະຄະຕິການກ່າວໂທດຜູ້ຖືກເຄາະຮ້າຍ ຍັງຄົງແຜ່ຫຼາຍໃນບັນດາເຈົ້າໜ້າທີ່ຕຳຫຼວດ, ໄອຍະການ ແລະ ຜູ້ພິພາກສາ. ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ມັກຈະຖືກຖາມໃນລັກສະນະທີ່ຂາດຄວາມລະອຽດອ່ອນ ຫຼື ຄຳນຶງເຖິງຄວາມບອບຊ້ຳ, ຖືກສອບຖາມຊ້ຳໄປຊ້ຳມາ ແລະ ຖືກຕັ້ງຂໍ້ສົງໄສຕໍ່ຄວາມໜ້າເຊື່ອຖື, ເຊິ່ງກໍ່ໃຫ້ເກີດການຖືກໃຊ້ຄວາມຮຸນແຮງຊ້ຳສອງ[7] ແລະ ເຮັດໃຫ້ພວກເຂົາບໍ່ກ້າລາຍງານເຫດການດັ່ງກ່າວ.

ໂດຍທົ່ວໄປແລ້ວ, ສະຖາບັນຍຸຕິທຳຍັງຂາດຂັ້ນຕອນ ແລະ ມາດຕະການປ້ອງກັນທີ່ຄຳນຶງເຖິງບົດບາດຍິງ-ຊາຍ. ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ມັກຈະລາຍງານວ່າ ບໍ່ມີສະຖານທີ່ແຈ້ງຄວາມ/ລາຍງານທີ່ເປັນສ່ວນຕົວ, ຂາດການຊ່ວຍເຫຼືອດ້ານຈິດໃຈ, ຂາດການປ້ອງກັນຈາກການຖືກຕອບໂຕ້, ບໍ່ມີທາງເຂົ້າແຍກຈາກຜູ້ຖືກກ່າວຫາວ່າກະທຳຜິດ, ບໍ່ມີການພິຈາລະນາຄະດີແບບປິດລັບ ຫຼື ການໃຫ້ການທາງໄກຜ່ານອຸປະກອນສື່ສານໃນລະຫວ່າງການສືບສວນ-ສອບສວນ ແລະ ການພິຈາລະນາຄະດີໃນສານ. ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຫຼາຍຄົນ ຍັງຖືກບັງຄັບໃຫ້ພະເຊີນໜ້າກັບຜູ້ຖືກກ່າວຫາວ່າກະທຳຜິດໂດຍກົງ ໃນລະຫວ່າງຂະບວນການຂອງສານ ເຊິ່ງຍິ່ງເຮັດໃຫ້ສະພາວະຈິດໃຈທີ່ຖືກກະທົບກະເທືອນນັ້ນ ຮ້າຍແຮງຂຶ້ນກວ່າເກົ່າ.

ຂໍ້ຈຳກັດດ້ານຂີດຄວາມສາມາດ ຍິ່ງຕອກຍ້ຳຄວາມທຸກຍາກລຳບາກຂອງຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກ SGBV. ໃນປັດຈຸບັນ, ເຈົ້າໜ້າທີ່ຕຳຫຼວດຍິງ ແລະ ທະນາຍຄວາມຍິງ ທີ່ຜ່ານການຝຶກອົບຮົມ, ໂດຍສະເພາະແມ່ນຢູ່ເຂດນອກຕົວເມືອງແມ່ນຍັງຂາດແຄນຫຼາຍ. ການເຂົ້າເຖິງການຊ່ວຍເຫຼືອທາງກົດໝາຍຍັງມີຈຳກັດ ແລະ ທະນາຍຄວາມມັກຈະພະເຊີນກັບການຈຳກັດການເຂົ້າເຖິງສຳນວນຄະດີ ແລະ ຫຼັກຖານໂດຍບໍ່ມີເຫດຜົນພຽງພໍ. ນອກຈາກນັ້ນ, ການກວດທາງນິຕິເວດວິທະຍາ ມັກຈະຮຽກຮ້ອງໃຫ້ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການເກັບກຳຫຼັກຖານທາງການແພດດ້ວຍຕົນເອງ.

ການບໍລິການຊ່ວຍເຫຼືອສຳລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ແມ່ນຍັງຂາດແຄນຊັບພະຍາກອນຢ່າງຮ້າຍແຮງ. ຈຳນວນບ່ອນພັກເຊົາຊົ່ວຄາວທີ່ຄຸ້ມຄອງໂດຍລັດ ແມ່ນມີຈຳກັດຫຼາຍ, ຂາດງົບປະມານສະເພາະສຳລັບການຟື້ນຟູຜົນເສຍຫາຍ, ແລະ ການເຂົ້າເຖິງຜູ້ແປພາສາໂດຍສະເພາະພາສາຊົນເຜົ່າ ແລະ ພາສາມື ແມ່ນຍັງບໍ່ພຽງພໍ.

ສຳລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດທີ່ມີຄວາມພິການ ແມ່ນຍັງພະເຊີນກັບອຸປະສັກທີ່ຊັບຊ້ອນຕື່ມອີກ, ລວມທັງການຕ້ອງເພິ່ງພາຜູ້ເບິ່ງແຍງ ເຊິ່ງອາດກາຍເປັນປັດໄຈຂັດຂວາງພວກເຂົາບໍ່ໃຫ້ລາຍງານການຖືກທຳຮ້າຍ, ພື້ນຖານໂຄງລ່າງທີ່ບໍ່ອຳນວຍຄວາມສະດວກໃນການເຂົ້າເຖິງ, ຂາດການຈັດສັນຂັ້ນຕອນທີ່ເໝາະສົມກັບສະພາບຄວາມພິການ, ການເຂົ້າເຖິງຂໍ້ມູນຂ່າວສານໃນຮູບແບບທີ່ອຳນວຍຄວາມສະດວກໃຫ້ຄົນພິການຍັງມີຈຳກັດ, ຕະຫຼອດຮອດກົນໄກການສົ່ງຕໍ່ ແລະ ການຊ່ວຍເຫຼືອທີ່ຍັງບໍ່ທັນແທດເໝາະກັບສະພາບຄວາມພິການຢ່າງພຽງພໍ.

---

[7] ການຖືກໃຊ້ຄວາມຮຸນແຮງຊ້ຳສອງ ໝາຍເຖິງ ຜົນກະທົບທີ່ເກີດຂຶ້ນກັບຜູ້ຖືກເຄາະຮ້າຍ ທີ່ບໍ່ໄດ້ເປັນຜົນໂດຍກົງຈາກການກະທຳຜິດທາງອາຍາ, ແຕ່ເກີດຈາກການຕອບໂຕ້ຂອງສະຖາບັນ ແລະ ບຸກຄົນ ລວມທັງໃນລະຫວ່າງການຕິດຕໍ່ກັບລະບົບຍຸຕິທຳທາງອາຍາ ແລະ ລະບົບອື່ນໆທີ່ກ່ຽວຂ້ອງ ຕໍ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ.

**ບົດສະຫຼຸບຂອງຂໍ້ສະເໜີແນະທີ່ສຳຄັນ**

ເພື່ອເຮັດໃຫ້ກອບກົດໝາຍ ແລະ ການປະຕິບັດຕົວຈິງຂອງ ສປປ ລາວ ສອດຄ່ອງກັບພັນທະພາຍໃຕ້ກົດໝາຍສິດທິມະນຸດສາກົນ ແລະ ເພື່ອຮັບປະກັນການເຂົ້າເຖິງຄວາມຍຸຕິທຳ ແລະ ການບັນທຶກທຸກທີ່ມີປະສິດທິພາບສຳລັບຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກ SGBV, ບົດສຶກສາຂໍ້ມູນເບື້ອງຕົ້ນນີ້ມີຂໍ້ສະເໜີແນະໃຫ້ ສປປ ລາວ ດັ່ງນີ້:

- ເສີມສ້າງກອບກົດໝາຍກ່ຽວກັບ SGBV ໂດຍການປັບປຸງປະມວນກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (LPCVWC) ເພື່ອຮັບປະກັນວ່າການປົກປ້ອງຈະກວມເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດທຸກຄົນ, ລວມທັງເພດຊາຍ ແລະ ບຸກຄົນທີ່ມີຄວາມຫຼາກຫຼາຍທາງເພດ.

- ປະຕິຮູບກົດໝາຍວ່າດ້ວຍຄວາມຮຸນແຮງທາງເພດ ລວມທັງການນຳໃຊ້ນິຍາມການຂົ່ມຂືນບົນພື້ນຖານຂອງ "ຄວາມສະໝັກໃຈ" (ເຊິ່ງຄວາມສະໝັກໃຈໝາຍເຖິງການຕົກລົງຍອມຮັບໂດຍຄວາມມັກໃຈ ເຊິ່ງເກີດຈາກເຈດຈຳນົງທີ່ເປັນອິດສະລະຂອງບຸກຄົນ), ການກຳນົດໃຫ້ການຂົ່ມຂືນຄູ່ສົມລົດເປັນອາດຊະຍາກຳທີ່ມີຄວາມຮ້າຍແຮງເທົ່າທຽມກັນ, ການກຳນົດໂທດທາງອາຍາຕໍ່ການລ່ວງລະເມີດທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດຜ່ານລະບົບເຕັກໂນໂລຊີ (TFGBV) ແລະ ຍົກເລີກໂທດປະຫານຊີວິດໃນທຸກກໍລະນີ. ໃນລະຫວ່າງທີ່ລໍຖ້າການຍົກເລີກນັ້ນ, ໃຫ້ກຳນົດການໂຈະການປະຫານຊີວິດ ແລະ ປະຕິບັດຕາມສິດໃນການມີຊີວິດຢ່າງເຕັມສ່ວນ.

- ຍົກເລີກຂໍ້ກຳນົດທາງອາຍາທີ່ມີລັກສະນະຈຳແນກ ເຊິ່ງເປັນອຸປະສັກຕໍ່ການລາຍງານ ແລະ ສົ່ງຜົນກະທົບທາງລົບຕໍ່ແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດຈາກ SGBV ຢ່າງບໍ່ສົມສ່ວນ, ລວມທັງກົດໝາຍທີ່ກຳນົດໂທດທາງອາຍາຕໍ່ການວຸວູກ, ຜູ້ຖືກເຄາະຮ້າຍຈາກການຮ່ວມປະເວນີໃນເຄືອຍາດ, ການຂາຍບໍລິການທາງເພດ, ການທຳມິດສະຈານ ແລະ ການມີເພດສຳພັນໂດຍສະໝັກໃຈໃນຮູບແບບອື່ນໆ.

- ຈຳກັດການນຳໃຊ້ການແກ້ໄຂຂໍ້ຂັດແຍ່ງແບບທາງເລືອກໃນຄະດີ SGBV ໂດຍຮັບປະກັນວ່າ "ການສຶກສາອົບຮົມ", "ການປະນີປະນອມ" ແລະ "ການໄກ່ເກ່ຍ" ຈະບໍ່ຖືກໃຫ້ຄວາມສຳຄັນຫຼາຍກວ່າຂະບວນການທາງສານ ແລະ ຈະຖືກນຳໃຊ້ພຽງແຕ່ໃນກໍລະນີຍົກເວັ້ນທີ່ກົດໝາຍ ແລະ ມາດຕະຖານສິດທິມະນຸດສາກົນອະນຸຍາດເທົ່ານັ້ນ, ເຊິ່ງຕ້ອງຢູ່ບົນພື້ນຖານຄວາມສະໝັກໃຈທີ່ໄດ້ຮັບຂໍ້ມູນຢ່າງຄົບຖ້ວນຂອງຜູ້ຖືກເຄາະຮ້າຍ, ມີມາດຕະການປ້ອງກັນທີ່ເໝາະສົມ ແລະ ດຳເນີນໂດຍຜູ້ຊ່ຽວຊານທີ່ຜ່ານການຝຶກອົບຮົມ.

- ປັບປຸງການຕອບໂຕ້ຂອງຂະແໜງຍຸຕິທຳ ຜ່ານການສ້າງໜ່ວຍງານສະເພາະດ້ານ SGBV ພາຍໃນການບໍລິການຂອງຕຳຫຼວດ ແລະ ອົງການໄອຍະການ; ກຳນົດໃຫ້ມີການຝຶກອົບຮົມທີ່ຄຳນຶງເຖິງບົດບາດຍິງ-ຊາຍໃຫ້ແກ່ບຸກຄະລາກອນໃນຂະແໜງຍຸຕິທຳ; ເພີ່ມການມີສ່ວນຮ່ວມຂອງເຈົ້າໜ້າທີ່ຍິງທີ່ຜ່ານການຝຶກອົບຮົມໃນການແກ້ໄຂຄະດີ SGBV ແລະ ຢຸດເຊົາການປະຕິບັດທີ່ກໍ່ໃຫ້ເກີດຜົນກະທົບທາງຈິດໃຈຈາກການຖືກໃຊ້ຄວາມຮຸນແຮງຊໍ້າສອງ ຫຼື ເຮັດໃຫ້ຜູ້ຖືກເຄາະຮ້າຍສ່ຽງຕໍ່ການຖືກແກ້ແຄ້ນ.

- ຂະຫຍາຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ລວມທັງສະຖານທີ່ພັກເຊົາຊົ່ວຄາວ, ການຊ່ວຍເຫຼືອທາງດ້ານກົດໝາຍ, ການບໍລິການນິຕິເວດ, ການຈັດສັນສິ່ງອຳນວຍຄວາມສະດວກສຳລັບຄົນພິການ, ຜູ້ແປພາສາ ແລະ ງົບປະມານສະເພາະສຳລັບການບັນທຶກທຸກ ແລະ ການຊ່ວຍເຫຼືອ, ໂດຍສະເພາະໃນເຂດຊົນນະບົດ ແລະ ໃນຊຸມຊົນດ້ອຍໂອກາດ, ລວມທັງກຸ່ມຊົນເຜົ່າທີ່ບໍ່ຊຳນານພາສາລາວ ແລະ ຄົນພິການ.

- ເສີມສ້າງການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການເກັບກຳຂໍ້ມູນ ໂດຍການສ້າງລະບົບການເກັບກຳ ແລະ ເຜີຍແຜ່ຂໍ້ມູນແບບແຍກປະເພດກ່ຽວກັບທຸກຮູບແບບຂອງ SGBV ຢ່າງເປັນປົກກະຕິ.

## Commission Members

January 2026

**President:**
Prof. Carlos Ayala, Venezuela

**Vice-Presidents:**
Justice Radmila Dragicevic-Dicic, Serbia
Justice Sir Nicolas Bratza, United Kingdom

**Executive Committee:**
(Chair) Ms. Roberta Clarke, Barbados
Ms. Nahla Haidar El Addal, Lebanon
Mr. Mazen Darwish, Syria
Justice Qinisile Mabuza, Eswatini
Ms. Mikiko Otani, Japan
Prof. Marco Sassoli, Italy/Switzerland
Mr. Wilder Tayler, Uruguay

**Other Commission Members:**

Africa
Justice Azhar Cachalia, Africa
Justice Moses Chinhengo, Africa
Ms. Jamesina King, Africa
Justice Charles Mkandawire, Africa
Justice Aruna Narain, Africa
Justice Lillian Tibatemwa-Ekirikubinza, Africa
Justice Sanji Monageng, Africa
Justice Willy Mutunga, Africa
Mr. Lawrence Mute, Africa

Asia & Europe
Justice Ajit Prakash Shah, Asia
Justice Kalyan Shrestha, Asia
Ms. Ambiga Sreenevasan, Asia
Ms. Imrana Jalal, Asia
Ms. Miyeon Kim, Asia
Prof. Kyong-Wahn Ahn, Asia
Justice Adolfo Azcuna, Asia
Dr. Elizabeth Biok, Asia
Ms. Hina Jilani, Asia
Ms. Chinara Aidarbekova, Europe
Justice Martine Comte, Europe
Ms. Gulnora Ishankhanova, Europe
Ms. Asne Julsrud, Europe
Justice Tamara Morschakova, Europe
Justice Egbert Myjer, Europe
Dr. Jarna Petman, Europe
Justice Stefan Trechsel, Europe
Prof. Fionnuala Ni Aolain, Europe
Ms. Patricia Schulz, Europe
Ms. Anne Ramberg, Europe
Professor Laurence Burgorgue-Larsen, Europe

MENA
Ms. Hadeel Abdel Aziz, MENA
Mr. Marzen Darwish, MENA
Mr. Gamal Eid, MENA
Justice Kalthoum Kennou, MENA
Justice Fatsah Ouguergouz, MENA
Mr. Michael Sfard, MENA
Justice Marwan Tashani, MENA
Ms. Mona Rishmawi, MENA

Americas
Mr. Reed Brody, Americas
Ms. Catalina Botero, Americas
Prof. José Luis Caballero Ochoa, Americas
Prof. Juan Mendez, Americas
Prof. Mónica Pinto, Americas
Prof. Victor Rodriguez Rescia, Americas
Mr. Alejandro Salinas Rivera, Americas
Prof. Rodrigo Uprimny Yepes, Americas
Ms. Claudia Paz y Paz, Americas
Ms. Roberta Clarke, Americas
Ms. Beth Van Schaack, Americas
Mr. Eduardo Ferrer MacGregor, Americas

International
Commission
of Jurists

Rue des Buis 3
P.O. Box 1740
1201 Geneva
Switzerland

**t** +41 22 979 38 00
**f** +41 22 979 38 01
www.icj.org